## ຣັຊກາລເຈົ້າອະນຸຣຸດທະ (ຄ.ສ. 1791-1817)

ເມື່ອເຈົ້າສຸຣິຍະວົງສ໌ສັຽງພຣະຊົນແລ້ວ ເສນາອາມາດຫລວງພຣະບາງ ຈຶ່ງບອກລົງໄປບາງກອກ ບາງກອກຂໍຕັ້ງເຈົ້າອະນຸຣຸດທະ ໂອຣົດອົງທີ 2 ຂອງເຈົ້າອິນທະໂສມ ຂຶ້ນເປັນເຈົ້າແຜ່ນດິນຫລວງພຣະບາງ ຕັ້ງເຈົ້າບາກ ນ້ອງຊາຍເປັນອຸປຣາດ ແລະ ຕັ້ງເຈົ້າມັນທາຕຸຣາດ ໂອຣົດຂອງເຈົ້າອະນຸຣຸດທະ ເປັນເຈົ້າຣາຊວົງ.

ເມື່ອປີ ຄ.ສ. 1792 ເຈົ້ານັນທະເສນ ເຈົ້ານະຄອນວຽງຈັນ ໄດ້ຍົກທັບມາຕີນະຄອນຫລວງພຣະບາງ ຈັບເຈົ້າອະນຸຣຸດທະ, ເຈົ້າບາກ, ເຈົ້າມັນທາຕຸຣາດ ສົ່ງລົງໄປກັກໄວ້ທີ່ບາງກອກ. ເຈົ້າອະນຸຣຸດທະ ຖືກກັກຢູ່ 4 ປີ ຈຶ່ງພົ້ນໂທດ ແລ້ວໄດ້ຂຶ້ນຄອງຫລວງພຣະບາງຕາມເດີມ ໃນປີ ຄ.ສ. 1796 ຈຶ່ງສັຽງ ພຣະຊົນ ໂຣມຊົນມາຍຸໄດ້ 82 ປີ ມີຣາຊໂອຣົດ 6 ອົງ ຄື: ເຈົ້າມັນທາຕຸຣາດ, ເຈົ້າສຸດທິຣາດ, ເຈົ້າໄຊ ຍະຣາດ, ເຈົ້າຣາຊໄພ, ເຈົ້າອຸ່ນແກ້ວ, ເຈົ້າຊ້າງ ແລະ ຣາຊທິດາ 3 ອົງຄື: ເຈົ້າຍິງປະທຸມມາ, ເຈົ້າຍິງ ຄຳຫລ້າ ແລະ ເຈົ້າຍິງໄວຍະກາ.

## ຣັຊກາລເຈົ້າມັນທາຕຸຣາດ (ຄ.ສ. 1817-1836)

ເຈົ້າອະນຸຣຸດທະ ສັຽງພຣະຊົນບໍ່ເຫິງ ເຈົ້າອຸປຣາດບາກ ກໍສັຽງພຣະຊົນໄປອີກ. ເຈົ້າມັນທາ ຕຸຣາດ ໂອຣົດຂອງເຈົ້າອະນຸຣຸດທະ ກໍໄດ້ຂຶ້ນຄອງເມືອງແທນ ໃນປີ ຄ.ສ. 1817 ແລ້ວຕັ້ງເຈົ້າສຸດທິຣາດ ເປັນອຸປຣາດ, ເຈົ້າໄຊຍະຣາດ ເປັນເຈົ້າຣາຊວົງ. ເຖິງປີ ຄ.ສ. 1825 ສົມເດັດພຣະພຸທເລີດຫລ້ານະພາໄລ ພຣະເຈົ້າແຜ່ນດິນສຍາມ ຣາຊກາລທີ 2 ສວັນຄົດ ເຈົ້າມັນທາຕຸຣາດ ໄດ້ເວນຣາຊສົມບັດໃຫ້ເຈົ້າ ອຸປຣາດບາກ ຮັກສາກາລແທນ ແລ້ວພຣະອົງກໍລົງໄປກຸງເທບ ຂໍອຸປສົມບົດຕໍ່ຫນ້າພຣະສົບ ໄດ້ທຳພິທີ ອຸປສົມບົດຢູ່ວັດພຣະແກ້ວ ແລ້ວໄປຈຳພັນສາຢູ່ວັດມະຫາທາດ ໄດ້ພັນສານຶ່ງ. ປີ ຄ.ສ. 1823 ຈຶ່ງລາ ສິກຂາບົດ ກັບຄືນມາຄອງເມືອງຕາມເດີມ.

ເຈົ້າມັນທາຕຸຣາດ ມີໂອຣົດ 9 ອົງ ຄື: ເຈົ້າສຸຂເສີມ 1 ເຈົ້າຈັນທະຣາດ 1 ເຈົ້າໂພເນື້ອທອງ 1 ເຈົ້າອຸ່ນຄຳ 1 ເຈົ້າບົວລະພັນ 1 ແລະ ມີທິດາ 6 ອົງ ຄື: ເຈົ້າຍິງຍອດຄຳ 1 ເຈົ້າຍິງສົມມາ 1 ເຈົ້າຍິງທອງທິບ 1 ເຈົ້າຍິງເມັງຄຳ 1 ເຈົ້າຍິງສົມພະລີ 1 ເຈົ້າຍິງທອງສຸກ 1.

ໃນປີ ຄ.ສ. 1827 ພຣະເຈົ້າອະນຸວົງແຫ່ງນະຄອນວຽງຈັນ ໄດ້ຄິດກອບກູ້ເອກະຣາດ ປົດແອກ ອອກຈາກຄວາມເປັນທາດຂອງສຍາມ ຈຶ່ງໄດ້ສົ່ງພຣະຣາຊສານ ແລະ ເຄື່ອງຣາຊບັນນາກາລ ມາຂໍ